ພັກປະຊາຊົນປະຕິວັດລາວ

# ມະຕິ

## ຂອງຄະນະບໍລິຫານງານສູນກາງພັກ
## ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ

ນະຄອນຫຼວງວຽງຈັນ, ວັນທີ **12 ມີນາ 2025**

# ພັກປະຊາຊົນປະຕິວັດລາວ

ຄະນະບໍລິຫານງານສູນກາງພັກ

ເລກທີ 03 /ຄບສພ

ນະຄອນຫຼວງວຽງຈັນ, ວັນທີ 12 ມິນາ 2025

## ມະຕິ
## ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ

- ອີງຕາມກົດລະບຽບ ຂອງພັກປະຊາຊົນປະຕິວັດລາວ ສະໄໝທີ XI;
- ອີງຕາມມະຕິກອງປະຊຸມ ສະໄໝວິສາມັນ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ທີ່ດຳເນີນແຕ່ວັນທີ 24-25 ກຸມພາ 2025;
- ອີງຕາມການຄົ້ນຄວ້າ ຂອງຄະນະປັບປຸງກົງຈັກການຈັດຕັ້ງ ສະເໜີຕໍ່ກອງປະຊຸມ ສະໄໝວິສາມັນ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໃນຄັ້ງວັນທີ 25 ກຸມພາ 2025;

### ຄະນະບໍລິຫານງານສູນກາງພັກ ອອກມະຕິ:

### I. ສະພາບລວມ, ໝາກຜົນ ແລະ ຄວາມຈຳເປັນ ຂອງການປັບປຸງກົງຈັກການຈັດຕັ້ງ

ນັບແຕ່ການສ້າງຕັ້ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຕົ້ນມາ, ກົງຈັກການຈັດຕັ້ງ ຂອງລະບອບການເມືອງປະຊາທິປະໄຕປະຊາຊົນ ໄດ້ຮັບການປັບປຸງ, ບູລະນະ ຢ່າງຕໍ່ເນື່ອງ ເຮັດໃຫ້ການນຳພາຊີ້ນຳ, ການບໍລິຫານຄຸ້ມຄອງ ໄດ້ມີປັດໃຈໃໝ່ ແລະ ຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ, ສາມາດເສີມຂະຫຍາຍ ແລະ ດຳລົງບົດບາດ ໃນການຫັນແນວທາງປ່ຽນແປງໃໝ່ ຂອງພັກ ມາເປັນນະໂຍບາຍ, ເປັນແຜນພັດທະນາ, ເປັນກົດໝາຍ ເພື່ອອຳນວຍຄວບຄຸມການບໍລິຫານ, ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ.

ເຖິງຢ່າງນັ້ນກໍຕາມ, ເມື່ອທຽບກັບໜ້າທີ່ການເມືອງ ຂອງພາລະກິດປະຕິວັດ ຂອງພັກເຮົາແລ້ວ ກົງຈັກການຈັດຕັ້ງ ຂອງປະເທດເຮົາ ຍັງບໍ່ທັນໝັກແໜ້ນ, ເຂັ້ມແຂງ ໄດ້ຢ່າງເຕັມສ່ວນ, ຈຶ່ງຕ້ອງໄດ້ມີການປັບປຸງປ່ຽນແປງໄປຕາມລະດັບການຂະຫຍາຍຕົວທາງດ້ານການເມືອງ, ການພັດທະນາເສດຖະກິດ-ສັງຄົມ ກໍຄື ການປ່ຽນແປງດ້ານແນວທາງ, ແຜນນະໂຍບາຍ ຂອງພັກ ໃນແຕ່ລະໄລຍະ.

ຜ່ານການປຶກສາຫາລື ຢ່າງເລິກເຊິ່ງ, ກົງໄປກົງມາ ຕໍ່ບັນຫາກົງຈັກການຈັດຕັ້ງ ຂອງລະບົບການເມືອງ ຢູ່ປະເທດເຮົາ, ຄະນະບໍລິຫານງານສູນກາງພັກ ໄດ້ເປັນເອກະພາບກັນຮັບຮູ້ບັນຫາ ແລະ ຄວາມຈຳເປັນ ໃນການປັບປຸງກົງຈັກການຈັດຕັ້ງ ດັ່ງນີ້:

1. ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ V ຂອງພັກ ເປັນຕົ້ນມາ ໂດຍສະເພາະ ມະຕິ 5 ສະໄໝທີ V ໄດ້ມີທິດຊີ້ນຳປັບປຸງກົງຈັກ ຂອງທຸກຂັ້ນ, ທຸກຂະແໜງການ ໃຫ້**ກະທັດຮັດ, ສົມເຫດສົມຜົນ ແລະ ເອົາຄຸນນະພາບເປັນຕົ້ນຕໍ**; ຜ່ານການປັບປຸງຕົວຈິງ ດ້ວຍການຍຸບ, ໂຮມ ກະຊວງ, ອົງການ, ບັນດາກົມ ແລະ ພະແນກ ເຂົ້າກັນໄປມາຫຼາຍເທື່ອ, ແຕ່ສິ່ງສຳຄັນ ແມ່ນກົງຈັກຊ່ວຍວຽກ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ມີລັກສະນະເພີ່ມຂຶ້ນ... ມາເຖິງປະຈຸບັນ ຍັງບໍ່ທັນມີການຫັນປ່ຽນພໍເທົ່າໃດ, ກົງຈັກຍັງໃຫຍ່ໂຕ, ບໍ່ໄປຕາມທິດ **"ກະທັດຮັດ, ສົມເຫດສົມຜົນ ແລະ ມີປະສິດທິພາບ"** ຫຼື ທິດ **"ກະທັດຮັດ, ໂລ່ງລ່ຽນ, ມີປະສິດທິພາບ ແລະ ເຂັ້ມແຂງ"** ໄດ້ຢ່າງແທ້ຈິງ. ຮອດປີ 2024, ກົງຈັກການຈັດຕັ້ງ ຢູ່ຂັ້ນສູນກາງ ມີທັງໝົດ 47 ພາກສ່ວນ ນັບທັງອົງການ ຂອງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ມີຈຳນວນກົມ 456 ກົມ ແລະ ມີພະແນກ ຂຶ້ນກັບກົມ ຈຳນວນ 2.222 ພະແນກ;

2. ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງກະຊວງ, ອົງການ ຂັ້ນສູນກາງ ແລະ ຂະແໜງການທ້ອງຖິ່ນ ຈຳນວນໜຶ່ງບໍ່ທັນຈະແຈ້ງ, ຊັດເຈນ, ຍັງຊໍ້າຊ້ອນ, ກ້າວກ່າຍກັນ, ບາງວຽກຫຼາຍພາກສ່ວນຊີ້ນຳ, ຫຼາຍພາກສ່ວນເຮັດ, ຂະນະທີ່ບາງວຽກບໍ່ມີໃຜເຮັດ, ເມື່ອເກີດບັນຫາຂຶ້ນ ກໍໂຍນຄວາມຮັບຜິດຊອບໃຫ້ກັນ;

3. ການປະຕິບັດພາລະບົດບາດຄຸ້ມຄອງມະຫາພາກ ຂອງບັນດາກະຊວງ, ອົງການຂັ້ນສູນກາງ ກໍຄືຂະແໜງການທ້ອງຖິ່ນ ຫຼາຍດ້ານໄດ້ມີການກຳນົດອອກເປັນນິຕິກຳ ທີ່ຈະແຈ້ງແລ້ວ ແຕ່ຕົວຈິງຍັງເຮັດບໍ່ທັນໄດ້, ມີການອູ້ມວຽກ, ສ້າງຊ່ອງຫວ່າງຫາຜົນປະໂຫຍດສ່ວນຕົວ, ພັກພວກ-ກຸ່ມກ້ອນ. ກົນໄກ, ແບບແຜນວິທີເຮັດວຽກ ບໍ່ທັນຮັດກຸມ, ຫຼາຍຂັ້ນຂອດ-ຫຼາຍຂັ້ນຕອນ, ການປະສານງານກັນ ແກ້ໄຂບັນຫາບໍ່ທັນວ່ອງໄວ ແລະ ທັນການ, ການບໍລິຫານລັດ ຕາມທິດຫັນເປັນທັນສະໄໝ ໃນແຕ່ລະວຽກງານ ຍັງຊັກຊ້າ... ເຊິ່ງໄດ້ສ້າງຄວາມສະຫງັກຊັກຊ້າ ໃຫ້ແກ່ວຽກງານລັດຖະການ, ຄວາມບໍ່ມີປະສິດທິພາບ ໃນການຄຸ້ມຄອງ-ບໍລິຫານ, ສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມ ໃນການເຄື່ອນໄຫວ ດຳເນີນການຜະລິດ-ທຸລະກິດ ຂອງປະຊາຊົນ, ຜູ້ປະກອບການ, ນັກລົງທຶນ ໃນການຂໍອະນຸມັດຕ່າງໆ ເປັນເຫດໃຫ້ ສປປ ລາວ ຖືກຈັດລຳດັບຄວາມສະດວກ ໃນການຂໍອະນຸມັດດຳເນີນທຸລະກິດ ຢູ່ລຳດັບນັບມື້ນັບຕ່ຳລົງຖ້າທຽບໃສ່ປະເທດຕ່າງໆ ໃນໂລກ;

4. ການກຳນົດຕຳແໜ່ງງານ ຍັງມີບາງດ້ານບໍ່ທັນຈະແຈ້ງ, ຕ້ອງການພະນັກງານຫຼາຍ, ບໍ່ທັນໄປຖືກຕາມທິດ ຄົນໜຶ່ງເຮັດຫຼາຍໜ້າວຽກ; ລັດຖະກອນ ປີ 2024 ມີທັງໝົດ 168.572 ຄົນ (ໃນນີ້ ບໍ່ລວມກຳລັງປະກອບອາວຸດ), ກວມເອົາ 2,18% ຂອງພົນລະເມືອງ, ທຽບໃສ່ປະເທດອາຊຽນ ຢູ່ລຳດັບທີ 6, ລັດຖະບານ ຕ້ອງໄດ້ແບກຫາບງົບປະມານເບີກຈ່າຍດ້ານຕ່າງໆ ໃຫ້ພະນັກງານ ເປັນຈຳນວນມະຫາສານ ແຕ່ໜ້າວຽກ ກໍບໍ່ທັນເດີນແມ່ນແລ່ນສະດວກ ແຕ່ຢ່າງໃດ (ປີ 2024 ປະມານ 46 ພັນກວ່າຕື້ກີບກວມເອົາ 38% ຂອງລາຍຮັບປະຈຳປີ ເທົ່າກັບ 6,29% ຂອງ GDP) ເກີດມີສະພາບຂາດດຸນ ລະຫວ່າງ ລາຍຮັບ ແລະ ລາຍຈ່າຍນັບມື້ນັບກວ້າງອອກ, ບໍ່ສາມາດສະສົມທຶນ ເພື່ອພັດທະນາປະເທດ; ພ້ອມນັ້ນ ການສັບຊ້ອນ, ຈັດວາງ ພະນັກງານ-ລັດຖະກອນ ຢູ່ແຕ່ລະຂັ້ນ ກໍບໍ່ທັນຮັດກຸມ, ບໍ່ສົມສ່ວນ-ດຸນດ່ຽງກັນ ລະຫວ່າງສູນກາງ, ທ້ອງຖິ່ນ-ຮາກຖານ...

ຈາກສະພາບຄືດັ່ງກ່າວນັ້ນ ຈຶ່ງບໍ່ສາມາດປັບປຸງ ຫຼື ກ້າວສູ່ການປະຕິຮູບນະໂຍບາຍຂອງລະບອບເງິນເດືອນ, ເງິນອຸດໜູນນະໂຍບາຍ ຂອງພະນັກງານ-ລັດຖະກອນ ໃຫ້ແທດເໝາະ ແລະ ສົມເຫດສົມຜົນ ກັບລະດັບການຂະຫຍາຍຕົວ ຂອງການພັດທະນາ ແລະ ຄ່າຄອງຊີບໄດ້ເທື່ອ, ຈຶ່ງສົ່ງຜົນກະທົບ ແລະ ເກີດມີກໍລະນີຄຸນນະພາບ ແລະປະສິດທິຜົນ ຂອງວຽກງານຍັງຕໍ່າ, ການສະເລ່ຍ-ເກື້ອກູນສູງ, ຈຶ່ງບໍ່ສາມາດສ້າງແຮງຈູງໃຈ ແລະ ກະຕຸກຊຸກຍູ້ ຄວາມຕັ້ງໜ້າ, ຫ້າວຫັນ ຕໍ່ການປະຕິບັດໜ້າທີ່, ບໍ່ສົ່ງເສີມໄດ້ຜູ້ມີຫົວຄິດປະດິດສ້າງ, ຜູ້ເຮັດວຽກດີ-ເຮັດວຽກເກັ່ງ ຂອງພະນັກງານ ລັດຖະກອນ ໄດ້ເທົ່າທີ່ຄວນ, ຍິ່ງໄປກວ່ານັ້ນ ກໍເກີດມີຊ່ອງຫວ່າງສວຍໃຊ້ໜ້າທີ່-ຕໍາແໜ່ງ, ສວຍໃຊ້ຊ່ອງຫວ່າງກົດໝາຍ ເພື່ອຫາຜົນປະໂຫຍດສ່ວນຕົວ, ສ້າງກຸ່ມກ້ອນທີ່ບໍ່ຊອບທໍາ, ເກີດມີການປຽບທຽບລັ່ງລາ, ລະແວງສົງໃສກັນ ລະຫວ່າງຂະແໜງການ ກັບຂະແໜງການ ແລະ ລະຫວ່າງ ກຸ່ມຂົງເຂດນີ້ກັບ ຂົງເຂດອື່ນ, ເຊິ່ງໄດ້ເກີດຂຶ້ນ ແລະ ກໍາລັງເກີດຂຶ້ນຢ່າງແຜ່ຫຼາຍ;

ບົນພື້ນຖານສະພາບດັ່ງກ່າວ ແລະ ໂດຍປະຕິບັດຕາມ ນະໂຍບາຍທີ່ວາງອອກ ໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກ່ຽວກັບການປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວ ຂອງບັນດາອົງການອໍານາດລັດ ໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ, ແກ້ໄຂສະພາບຊໍ້າຊ້ອນດ້ານພາລະບົດບາດ, ກໍານົດສາຍໄຍການຈັດຕັ້ງ ທີ່ຈະແຈ້ງ ແລະ ຮັດກຸມ, ເຮັດໃຫ້ຂະໜາດກົງຈັກບໍ່ໃຫຍ່ໂຕ, ທັນເປັນທັນສະໄໝ ເພື່ອຍົກສູງປະສິດທິຜົນວຽກງານ, ເຮັດໃຫ້ກຸ່ມແຖວລັດຖະກອນ ມີຈໍານວນໜ້ອຍລົງ ແຕ່ຄຸນນະພາບວຽກເພີ່ມຂຶ້ນ, ປະຢັດໄດ້ການໃຊ້ຈ່າຍງົບປະມານ ແລະ ດຸ່ນດ່ຽງງົບປະມານ ເຂົ້າສູ່ການພັດທະນາ, ລຶບລ້າງຄວາມທຸກຍາກໃຫ້ຫຼາຍຂຶ້ນ ແລະ ອື່ນໆ... ເພື່ອຮັບປະກັນໃຫ້ກົງຈັກການຈັດຕັ້ງ ກະທັດຮັດ, ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມ, ຍົກສູງປະສິດທິພາບ ຂອງການ ນໍາພາຊີ້ນໍາ ແລະ ຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມ ໃນເງື່ອນໄຂໃໝ່, ເພີ່ມຄວາມເຂັ້ມງວດ ແລະ ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະກອນ ໃຫ້ສູງຂຶ້ນ ຕາມທິດທັນປ່ຽນໄປສູ່ປະສິດທິພາບ ແລະ ສະມັດຕະພາບ ຂອງການບໍລິຫານ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ຫຼຸດຜ່ອນຂອດ-ຂັ້ນ, ເອົາວຽກທີ່ຄ້າຍຄືກັນໂຮມເຂົ້າກັນ, ບໍ່ໃຫ້ຊໍ້າຊ້ອນ-ກ້າວກ່າຍກັນ ເຮັດໃຫ້ການນໍາພາຊີ້ນໍາ, ການບໍລິຫານ-ຄຸ້ມຄອງ ມີປະສິດທິພາບສູງ ແລະວ່ອງໄວກວ່າເກົ່າ, ນໍາໃຊ້ງົບປະມານໃຫ້ມີປະສິດທິຜົນກວ່າເກົ່າ, ສ້າງເງື່ອນໄຂຄວາມສາມາດໃນການຍົກລະດັບເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຂອງພະນັກງານ-ລັດຖະກອນ ໃຫ້ສົມເຫດສົມຜົນ ແລະ ກ້າວສູ່ຄວາມສາມາດປະຕິຮູບລະບອບເງິນເດືອນຢູ່ປະເທດເຮົາ ໃນຕໍ່ໜ້າໃຫ້ເປັນຮູບປະທໍາ.

## II. ທັດສະນະຊີ້ນໍາ ຕໍ່ການປັບປຸງກົງຈັກການຈັດຕັ້ງ

ການປັບປຸງກົງຈັກການຈັດຕັ້ງໃນຄັ້ງນີ້ ຕ້ອງຮັບປະກັນການຈັດຕັ້ງປະຕິບັດ ຕາມທັດສະນະຊີ້ນໍາ ຂອງພັກເຮົາຢ່າງເຂັ້ມງວດ ດັ່ງນີ້:

1. ການປັບປຸງກົງຈັກການຈັດຕັ້ງ ແມ່ນຄວາມຈຳເປັນພາວະວິໄສ, ແມ່ນການນຳພາທີ່ມີລັກສະນະ "ປະຕິວັດ" ຂອງພັກເຮົາ ເພື່ອສືບຕໍ່ສ້າງກຳລັງແຮງ ແລະ ຄວາມສາມາດ ຢູ່ແຮງການປະຕິບັດແນວທາງປ່ຽນແປງໃໝ່ ຮອບດ້ານ ມີຫຼັກການ ຂອງພັກ ສູ່ລວງເລິກ;

2. ຕ້ອງເຮັດໃຫ້ກົງຈັກການຈັດຕັ້ງ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ກະທັດຮັດ, ຫຼຸດຈຳນວນກະຊວງ, ອົງການ, ພະແນກການ ຢູ່ແຂວງ, ເມືອງ ແລະ ຫຼຸດຈຳນວນພະນັກງານ-ລັດຖະກອນ ລົງ ໂດຍມີການປະຕິບັດນະໂຍບາຍຕ່າງໆຢ່າງເໝາະສົມ, ສັບຊ້ອນບຸກຄະລາກອນ ເຂົ້າໃນກົງຈັກການຈັດຕັ້ງ ຂອງແຕ່ລະກະຊວງ, ອົງການ ແລະ ຂະແໜງການ ຢູ່ທ້ອງຖິ່ນ ຄືນໃໝ່ ໃຫ້ຮັບປະກັນມາດຕະຖານ, ເງື່ອນໄຂ ເພື່ອສືບຕໍ່ປະຕິບັດໜ້າທີ່ການເມືອງ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນ ໃຫ້ເຂັ້ມແຂງ, ມີປະສິດທິຜົນ, ມີຄວາມໂປ່ງໃສ ຕາມທິດ ຫັນໄປສູ່ປະສິດທິພາບຂອງພະນັກງານ ລັດຖະກອນ ແຕ່ລະຄົນ;

3. ການປັບປຸງກົງຈັກ ຕ້ອງຮັບປະກັນຄວາມສະຫງົບ ທາງດ້ານການເມືອງ ແລະ ສັງຄົມຢ່າງໜັກແໜ້ນ ໂດຍຖືເອົາການສຶກສາອົບຮົມການເມືອງ-ນຳພາແນວຄິດ ສະມາຊິກພັກ, ພະນັກງານ ໃຫ້ເລິກເຊິ່ງ, ມີຄວາມເປັນເອກະພາບສູງ, ມີນ້ຳໃຈເສຍສະຫຼະ, ຕັດສິນໃຈປະຕິບັດຕາມການຈັດຕັ້ງ ກໍຄື ການຕົກລົງ ຂອງຂັ້ນເທິງ ຢ່າງເຂັ້ມງວດ;

4. ພາຍຫຼັງໂຮມກະຊວງ, ອົງການ ແລະ ພະແນກການຢູ່ທ້ອງຖິ່ນ ເຂົ້າກັນເປັນກະຊວງໃໝ່ ແລະ ພະແນກການໃໝ່ແລ້ວ, ຕ້ອງຄົ້ນຄວ້າ ເລືອກເຟັ້ນ, ສັບຊ້ອນ, ຈັດວາງ ສະມາຊິກພັກ, ພະນັກງານຄືນໃໝ່ ເຊິ່ງມີເປົ້າໝາຍຈຳນວນໜຶ່ງ ຈະໄດ້ສືບຕໍ່ປະຕິບັດໜ້າທີ່ ໃນຕຳແໜ່ງເດີມ ຫຼື ຫຼຸດຈາກຕຳແໜ່ງເດີມ ແລະ ເປົ້າໝາຍຈຳນວນໜຶ່ງ ຈະໄດ້ຮັບນະໂຍບາຍ ພັກການ-ຮັບອຸດໜູນ ບຳນານ ຫຼື ອຸດໜູນເທື່ອດຽວ ຕາມລະບຽບການ;

5. ການປັບປຸງໂຮມກະຊວງ, ອົງການ ແລະ ພະແນກການ ຢູ່ທ້ອງຖິ່ນ ເຂົ້າກັນ ຫຼື ໂອນວຽກໄປກະຊວງ, ອົງການອື່ນ ທີ່ສອດຄ່ອງ ຕ້ອງເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນຮັບຮູ້, ເຂົ້າໃຈ, ມີຄວາມເປັນເອກະພາບສູງ ຕໍ່ການຕົກລົງ ຂອງສູນກາງພັກ, ຮັບປະກັນໃຫ້ມີຄວາມສະຫງົບ, ບໍ່ເກີດມີການສວຍໂອກາດກະທຳສິ່ງທີ່ບໍ່ຖືກຕ້ອງ, ຕ້ອງຮັບປະກັນການປະຕິບັດໜ້າທີ່ການເມືອງ ກໍຄື ວຽກງານວິຊາສະເພາະ ໃຫ້ດຳເນີນໄປຢ່າງເປັນປົກກະຕິ ແລະ ມີຄວາມຕໍ່ເນື່ອງ.

**III. ທິດທາງ, ຄາດໝາຍ ການປັບປຸງກົງຈັກການຈັດຕັ້ງ**

**1. ທິດທາງ ການປັບປຸງກົງຈັກ:**

1.1 ປັບປຸງລັດຖະທຳມະນູນ, ກົດໝາຍ ແລະ ນະໂຍບາຍ ທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງກົງຈັກການຈັດຕັ້ງ ໃຫ້ເປັນລະບົບ, ຮັບປະກັນຄຸນນະພາບ ແລະ ທັນຕາມກຳນົດເວລາ;

ຈາກສະພາບຄືດັ່ງກ່າວນັ້ນ ຈຶ່ງບໍ່ສາມາດປັບປຸງ ຫຼື ກ້າວສູ່ການປະຕິຮູບນະໂຍບາຍຂອງລະບອບເງິນເດືອນ, ເງິນອຸດໜູນນະໂຍບາຍ ຂອງພະນັກງານ-ລັດຖະກອນ ໃຫ້ແທດເໝາະ ແລະ ສົມເຫດສົມຜົນ ກັບລະດັບການຂະຫຍາຍຕົວ ຂອງການພັດທະນາ ແລະ ຄ່າຄອງຊີບໄດ້ເທື່ອ, ຈຶ່ງສົ່ງຜົນກະທົບ ແລະ ເກີດມີກໍລະນີຄຸນນະພາບ ແລະປະສິດທິຜົນ ຂອງວຽກງານຍັງຕໍ່າ, ການສະເລ່ຍ-ເກື້ອກູນສູງ, ຈຶ່ງບໍ່ສາມາດສ້າງແຮງຈູງໃຈ ແລະ ກະຕຸກຊຸກຍູ້ ຄວາມຕັ້ງໜ້າ, ຫ້າວຫັນ ຕໍ່ການປະຕິບັດໜ້າທີ່, ບໍ່ສົ່ງເສີມໄດ້ຜູ້ມີຫົວຄິດປະດິດສ້າງ, ຜູ້ເຮັດວຽກດີ-ເຮັດວຽກເກັ່ງ ຂອງພະນັກງານ ລັດຖະກອນ ໄດ້ເທົ່າທີ່ຄວນ, ຍິ່ງໄປກວ່ານັ້ນ ກໍເກີດມີຊ່ອງຫວ່າງສວຍໃຊ້ໜ້າທີ່-ຕໍາແໜ່ງ, ສວຍໃຊ້ຊ່ອງຫວ່າງກົດໝາຍ ເພື່ອຫາຜົນປະໂຫຍດສ່ວນຕົວ, ສ້າງກຸ່ມກ້ອນທີ່ບໍ່ຊອບທໍາ, ເກີດມີການປຽບທຽບຊັ່ງຊາ, ລະແວງສົງໃສກັນ ລະຫວ່າງຂະແໜງການ ກັບຂະແໜງການ ແລະ ລະຫວ່າງ ກຸ່ມຂົງເຂດນີ້ກັບ ຂົງເຂດອື່ນ, ເຊິ່ງໄດ້ເກີດຂຶ້ນ ແລະ ກໍາລັງເກີດຂຶ້ນຢ່າງແຜ່ຫຼາຍ;

ບົນພື້ນຖານສະພາບດັ່ງກ່າວ ແລະ ໂດຍປະຕິບັດຕາມ ນະໂຍບາຍທີ່ວາງອອກ ໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກ່ຽວກັບການປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວ ຂອງບັນດາອົງການອໍານາດລັດ ໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ, ແກ້ໄຂສະພາບຊໍ້າຊ້ອນດ້ານພາລະບົດບາດ, ກໍານົດສາຍໄຍການຈັດຕັ້ງ ທີ່ຈະແຈ້ງ ແລະ ຮັດກຸມ, ເຮັດໃຫ້ຂະໜາດກົງຈັກບໍ່ໃຫຍ່ໂຕ, ທັນເປັນທັນສະໄໝ ເພື່ອຍົກສູງປະສິດທິຜົນວຽກງານ, ເຮັດໃຫ້ກຳລັງແຖວລັດຖະກອນ ມີຈໍານວນໜ້ອຍລົງ ແຕ່ຄຸນນະພາບວຽກເພີ່ມຂຶ້ນ, ປະຢັດໄດ້ການໃຊ້ຈ່າຍງົບປະມານ ແລະ ດຸ່ນດ່ຽງງົບປະມານ ເຂົ້າສູ່ການພັດທະນາ, ລົບລ້າງຄວາມທຸກຍາກໃຫ້ຫຼາຍຂຶ້ນ ແລະ ອື່ນໆ... ເພື່ອຮັບປະກັນໃຫ້ກົງຈັກການຈັດຕັ້ງ ກະທັດຮັດ, ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມ, ຍົກສູງປະສິດທິພາບ ຂອງການ ນໍາພາຊີ້ນໍາ ແລະ ຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມ ໃນເງື່ອນໄຂໃໝ່, ເພີ່ມຄວາມເຂັ້ມງວດ ແລະ ຄວາມຮັບຜິດຊອບ ຂອງພະນັກງານ-ລັດຖະກອນ ໃຫ້ສູງຂຶ້ນ ຕາມທິດທັນປ່ຽນໄປສູ່ປະສິດທິພາບ ແລະ ສະມັດຕະພາບ ຂອງການບໍລິຫານ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ຫຼຸດຜ່ອນຂອດ-ຂັ້ນ, ເອົາວຽກທີ່ຄ້າຍຄືກັນໂຮມເຂົ້າກັນ, ບໍ່ໃຫ້ຊໍ້າຊ້ອນ-ກ້າວກ່າຍກັນ ເຮັດໃຫ້ການນໍາພາຊີ້ນໍາ, ການບໍລິຫານ-ຄຸ້ມຄອງ ມີປະສິດທິພາບສູງ ແລະ ວ່ອງໄວກວ່າເກົ່າ, ນໍາໃຊ້ງົບປະມານໃຫ້ມີປະສິດທິຜົນກວ່າເກົ່າ, ສ້າງເງື່ອນໄຂຄວາມສາມາດໃນການຍົກລະດັບເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຂອງພະນັກງານ-ລັດຖະກອນ ໃຫ້ສົມເຫດສົມຜົນ ແລະ ກ້າວສູ່ຄວາມສາມາດປະຕິຮູບລະບອບເງິນເດືອນຢູ່ປະເທດເຮົາ ໃນຕໍ່ໜ້າໃຫ້ເປັນຮູບປະທໍາ.

## II. ທັດສະນະຊີ້ນໍາ ຕໍ່ການປັບປຸງກົງຈັກການຈັດຕັ້ງ

ການປັບປຸງກົງຈັກການຈັດຕັ້ງໃນຄັ້ງນີ້ ຕ້ອງຮັບປະກັນການຈັດຕັ້ງປະຕິບັດ ຕາມທັດສະນະຊີ້ນໍາ ຂອງພັກເຮົາຢ່າງເຂັ້ມງວດ ດັ່ງນີ້:

1.2 ປັບປຸງກົງຈັກການຈັດຕັ້ງ ດ້ວຍການຄົ້ນຄວ້າ, ກຳນົດ ແລະ ສັບຊ້ອນ ກົງຈັກຊ່ວຍວຽກ ຂອງກະຊວງ, ອົງການ (ຈຳນວນກົມ, ພະແນກ) ແລະ ຄາດຄະເນຈຳນວນພະນັກງານ-ລັດຖະກອນ ຕາມຕຳແໜ່ງງານ ຂອງກະຊວງ, ອົງການ ແລະ ພະແນກການຢູ່ທ້ອງຖິ່ນ ທີ່ນອນໃນເປົ້າໝາຍການປັບປຸງກົງຈັກການຈັດຕັ້ງ;

1.3 ປັບປຸງພາລະບົດບາດ, ໜ້າທີ່, ຂອບເຂດສິດ ຂອງບັນດາກະຊວງ, ອົງການ ແລະ ພະແນກການຢູ່ທ້ອງຖິ່ນ ທີ່ນອນໃນເປົ້າໝາຍປັບປຸງກົງຈັກການຈັດຕັ້ງ ໃຫ້ໄປຕາມທິດ ກະຊວງໜຶ່ງ, ກົມໜຶ່ງ, ພະແນກການໜຶ່ງ ຄຸ້ມຄອງຫຼາຍວຽກ, ຫຼາຍຂະແໜງການ; ພ້ອມກັນນັ້ນ ກໍສືບຕໍ່ແບ່ງຂັ້ນຄຸ້ມຄອງ, ແບ່ງສິດ-ຄວາມຮັບຜິດຊອບ ໃຫ້ລະອຽດ, ຈະແຈ້ງ ລະຫວ່າງ ກະຊວງ, ອົງການ ທີ່ຖືກປັບປຸງ ແລະ ພະແນກການກ່ຽວຂ້ອງ ຂອງທ້ອງຖິ່ນ;

1.4 ປັບປຸງ, ສັບຊ້ອນ, ຈັດວາງ ບຸກຄະລາກອນ ຄືນໃໝ່ ໃຫ້ແທດກັບຕົວຈິງ, ເນັ້ນຄຸນນະພາບເປັນຕົ້ນຕໍ, ແກ້ໄຂສະພາບພະນັກງານເຫຼືອບໍ່ພໍ, ບໍ່ຄ່ອນເກື້ອກູນ, ຫຼຸດຜ່ອນຈຳນວນພະນັກງານ-ລັດຖະກອນ ດ້ວຍຮູບການຕ່າງໆ, ຊຸກຍູ້ ສົ່ງເສີມໄດ້ຜູ້ດີ-ຜູ້ເກັ່ງ, ພຽບພ້ອມຄຸນນະທຳ, ຄຸນສົມບັດສິນທຳປະຕິວັດ ກໍຄື ດຶງດູດໄດ້ຜູ້ທີ່ມີຄວາມຮູ້, ຄວາມສາມາດ, ເຮັດວຽກມີຄຸນນະພາບ, ຜູ້ໜຶ່ງເຮັດໄດ້ຫຼາຍວຽກ, ອຸທິດຕົນ ເພື່ອຮັບໃຊ້ປະຊາຊົນ ແລະ ປະເທດຊາດທີ່ແທ້ຈິງໃຫ້ມີຈຳນວນເພີ່ມຂຶ້ນ;

1.5 ປັບປຸງກົນໄກ, ລະບອບນຳພາ, ແບບແຜນວິທີເຮັດວຽກ ຂອງຄະນະພັກ, ຄະນະນຳ, ຮາກຖານພັກ, ກົມກອງ, ພະແນກ ຂອງບັນດາກະຊວງ, ອົງການ ແລະ ພະແນກການຢູ່ທ້ອງຖິ່ນ ທີ່ໄດ້ໂຮມ, ໂອນ-ຍ້າຍ ໃຫ້ມີຄວາມຄ່ອງຕົວ, ສອດຄ່ອງກັບສະພາບ, ແທດກັບຕົວຈິງ ແລະ ມີວິທະຍາສາດ, ຮັບປະກັນໄດ້ຄວາມສະຫງົບ ຢູ່ພາຍໃນ, ທັງຮັບປະກັນປະສິດທິຜົນ ຂອງວຽກງານ;

1.6 ປັບປຸງ, ສັບຊ້ອນ ແລະ ນຳໃຊ້ ສະຖານທີ່ເຮັດວຽກ, ສຳນັກງານ ຂອງກະຊວງ, ອົງການ ແລະ ພະແນກການ ຢູ່ທ້ອງຖິ່ນ ທີ່ຖືກປັບປຸງ ໃຫ້ມີປະສິດທິພາບ, ຕ້ານການຟູມເຟືອຍ, ການສວຍໂອກາດ, ບໍ່ເຮັດໃຫ້ໂຄງລ່າງພື້ນຖານ, ຊັບສິນ, ພາຫະນະ, ວັດຖຸ, ອຸປະກອນ... ຕົກເຮ່ຍເສຍຫາຍ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການປັບປຸງກົງຈັກ ກໍຄື ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງການຈັດຕັ້ງ ພາຍຫຼັງການປັບປຸງກົງຈັກ;

1.7 ຮັບປະກັນດ້ານງົບປະມານ ເພື່ອຮັບໃຊ້ເຂົ້າໃນການປັບປຸງກົງຈັກ ກໍຄື ຮອງຮັບໃຫ້ແກ່ການເຄື່ອນໄຫວວຽກງານ ໃຫ້ມີປະສິດທິຜົນ ບົນຈິດໃຈປະຢັດ.

**ບົນພື້ນຖານນັ້ນ, ຄະນະບໍລິຫານງານສູນກາງພັກ ຕົກລົງປັບປຸງກົງຈັກການຈັດຕັ້ງ ດັ່ງນີ້:**

1) ໂຮມ ກະຊວງແຜນການ ແລະ ການລົງທຶນ ເຂົ້າກັບ ກະຊວງການເງິນ, ເອີ້ນຊື່ວ່າ: ກະຊວງ ການເງິນ;

2) ໂຮມ ກະຊວງພະລັງງານ ແລະ ບໍ່ແຮ່ ເຂົ້າກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ເອີ້ນວ່າ: ກະຊວງອຸດສາຫະກຳ ແລະ ການຄ້າ;

3) ໂຮມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບ ກະຊວງກະສິກຳ ແລະ ປ່າໄມ້, ຊື່ໃໝ່ເອີ້ນວ່າ: ກະຊວງກະສິກຳ ແລະ ສິ່ງແວດລ້ອມ;

4) ໂຮມກະຊວງພາຍໃນ ຂຶ້ນກັບຄະນະຈັດຕັ້ງສູນກາງພັກ, ເອົາວຽກຄຸ້ມຄອງລັດຖະກອນ, ວຽກແຂ່ງຂັນຍ້ອງຍໍ ແລະ ວຽກອື່ນໆທີ່ສອດຄ່ອງກັບ ພາລະບົດບາດ ຂອງຄະນະຈັດຕັ້ງສູນກາງພັກ, ພ້ອມທັງຍົກຍ້າຍບຸກຄະລາກອນ ທີ່ເຮັດວຽກດັ່ງກ່າວ ໄປຂຶ້ນກັບຄະນະຈັດຕັ້ງສູນກາງພັກ; ໂອນວຽກປົກຄອງ, ວຽກແຜນທີ່, ວຽກຄຸ້ມຄອງມະຫາພາກດ້ານ ສາສະໜາ ແລະ ວຽກ ອື່ນໆ ພ້ອມທັງບຸກຄະລາກອນ ທີ່ເຮັດວຽກໃນຂົງເຂດດັ່ງກ່າວ ໄປຂຶ້ນກັບ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງ, ອົງການອື່ນ ທີ່ເຫັນວ່າມີຄວາມສອດຄ່ອງ;

5) ໂອນວຽກສື່ມວນຊົນ (ວຽກຖະແຫຼງຂ່າວ) ພ້ອມທັງຍົກຍ້າຍບຸກຄະລາກອນ ອອກຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄປຂຶ້ນກັບ ຄະນະໂຄສະນາອົບຮົມສູນກາງພັກ. ປ່ຽນຊື່ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຊື່ໃໝ່ເອີ້ນວ່າ: ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ;

ສຳລັບວຽກ, ກົງຈັກ ລະອຽດ (ກົມ) ຂອງແຕ່ລະກະຊວງ ທີ່ຖືກໂຮມ, ຍຸບ, ໂອນ ຈະໄປຂຶ້ນກັບກະຊວງ, ອົງການໃດນັ້ນ, ມອບໃຫ້ຄະນະປັບປຸງກົງຈັກ ຄົ້ນຄວ້າ ແລະ ສະເໜີກົມການເມືອງສູນກາງພັກ ຕົກລົງ;

6) ສຳລັບກົງຈັກ ຂອງສະພາແຫ່ງຊາດ ຊຸດທີ X ແມ່ນສະເໜີໃຫ້ ຄະນະປະຈຳສະພາແຫ່ງຊາດ ເປັນເຈົ້າການຄົ້ນຄວ້າ, ພິຈາລະນາ ເພື່ອຫຼຸດຜ່ອນກົງຈັກການຈັດຕັ້ງ ຂອງສະພາແຫ່ງຊາດ ທີ່ມີໃນປະຈຸບັນ ໃຫ້ຍັງເຫຼືອ 5 ກຳມາທິການ ແລະ ຫ້ອງວ່າການ ສະພາແຫ່ງຊາດ;

7) ສ່ວນການປັບປຸງກົງຈັກ ຢູ່ທ້ອງຖິ່ນ (ນະຄອນຫຼວງ, ບັນດາແຂວງ ແລະ ເມືອງ) ແມ່ນໃຫ້ປັບປຸງໂຮມເຂົ້າກັນ ຕາມຂະແໜງສາຍຕັ້ງ ທີ່ມີການປັບປຸງ ໂຮມເຂົ້າກັນ ຢູ່ກະຊວງ, ອົງການທີ່ກ່າວມາຂ້າງເທິງ.

**2. ຄາດໝາຍ ແລະ ຜົນທີ່ຕ້ອງໄດ້ຮັບ:**

ການປັບປຸງກົງຈັກການຈັດຕັ້ງ ໃນຄັ້ງນີ້ ແມ່ນການປະຕິບັດແນວທາງການຈັດຕັ້ງ ຂອງພັກເຮົາ ໃຫ້ **"ກະທັດຮັດ, ໂລ່ງລ່ຽນ, ມີປະສິດທິພາບ ແລະ ເຂັ້ມແຂງ"** ເນື້ອແທ້ ແມ່ນການບໍລິຫານຈັດການອົງການ ເພື່ອນຳໃຊ້ຊັບພະຍາກອນຢ່າງປະຢັດ, ຄຸ້ມຄ່າ ແລະ ເກີດຜົນປະໂຫຍດສູງສຸດ, ມີປະສິດທິພາບ ແລະ ຍືນຍົງ; ພາຍຫຼັງການປັບປຸງກົງຈັກການຈັດຕັ້ງ ຕ້ອງຮັບປະກັນບັນລຸຄາດໝາຍ ດັ່ງນີ້:

2.1 ຫຼຸດຜ່ອນຈຳນວນ ກະຊວງ, ກົມ ແລະ ພະແນກການ ເຮັດໃຫ້ກົງຈັກ ກະທັດຮັດຂຶ້ນ, ມີຄວາມໜັກແໜ້ນ, ເຂັ້ມແຂງ, ມີຕຳແໜ່ງງານເໝາະສົມ, ຫຼຸດຜ່ອນຈຳນວນພະນັກງານ-ລັດຖະກອນ, ສັບຊ້ອນຄືນໃໝ່ ໃຫ້ເໝາະສົມ, ຫັນພະນັກງານ-ລັດຖະກອນ ຢູ່ສູນກາງ ລົງເພີ່ມໃຫ້ທ້ອງຖິ່ນ (ຂັ້ນເມືອງ ແລະ ຕາແສງ) ຢ່າງມີການເລືອກເຟັ້ນ ເພື່ອເພີ່ມກຳລັງແຮງ ຂອງຜູ້ນຳພາເຮັດຕົວຈິງ ຢູ່ຂັ້ນຮາກຖານ;

2.2 ບັນດາໜ້າວຽກ, ກຸ່ມວຽກ ໄດ້ຮັບການສັບຊ້ອນເຂົ້າກັນ ໃຫ້ເປັນລະບົບ, ເຮັດໃຫ້ພາລະບົດບາດ, ໜ້າທີ່, ຂອບເຂດສິດ ມີຄວາມຈະແຈ້ງ, ຄົບຖ້ວນ ແລະ ສົມບູນກວ່າເກົ່າ;

2.3 ເປັນກົງຈັກ ທີ່ມີແບບແຜນວິທີເຮັດວຽກທີ່ດີ (ມີວິທະຍາສາດ, ປະດິດສ້າງ, ແກ້ໄຂວຽກງານວ່ອງໄວ ແລະ ທັນການ), ຮັບປະກັນປະສິດທິຜົນ ຄື: ຫຼຸດຜ່ອນຂອດຂັ້ນ, ສິ່ງກີດໜ່ວງ ຫຼື ຂອດ ລະຫວ່າງກາງ ແລະ ການກ້າວກ່າຍ, ຊໍ້າຊ້ອນກັນ ເຊິ່ງໃນເມື່ອກ່ອນແມ່ນຂຶ້ນກັບຫຼາຍພາກສ່ວນ ຂອງຫຼາຍກະຊວງ ໃຫ້ມາຂຶ້ນກັບກະຊວງ, ອົງການ ແລະ ພະແນກດຽວ. ຫຼຸດຜ່ອນຊ່ອງຫວ່າງ, ຄວາມຫຍໍ້ທໍ້, ໂຍນຄວາມຮັບຜິດຊອບ ແລະ ການເອື່ອຍອີງໃສ່ກັນ. ສາມາດເຂົ້າເຖິງ, ມີຄວາມໂປ່ງໃສ ແລະ ກວດສອບ ໄດ້ຢ່າງເປັນລະບົບ;

2.4 ເປັນກົງຈັກ ທີ່ສາມາດຂັບເຄື່ອນການພັນລະຫຍາຍ ແນວທາງ, ແຜນນະໂຍບາຍ, ນະໂຍບາຍ ແລະ ກົດໝາຍ, ນິຕິກຳກ່ຽວຂ້ອງ ທີ່ວາງອອກໄດ້ເປັນຢ່າງດີ; ມີຄວາມເປັນເຈົ້າການ, ມີຄວາມສາມາດປະຕິບັດ ພາລະບົດບາດ, ໜ້າທີ່ ຂອງຕົນ ຕາມທິດ "ຫັນເປັນມືອາຊີບ";

2.5 ເປັນກົງຈັກທີ່ມີຄວາມບໍລິສຸດພຸດຜ່ອງ ປະຕິບັດໜ້າທີ່ ທີ່ຖືກມອບໝາຍ ແລະ ໃຫ້ບໍລິການຮັບໃຊ້ປະຊາຊົນຢ່າງແທ້ຈິງ, ບໍ່ອາຍາສິດ, ບໍ່ສ້າງຄວາມລຳຄານຫຍຸ້ງຍາກ, ເອົາລັດເອົາປຽບປະຊາຊົນ, ເຄື່ອນໄຫວຕາມແນວທາງ, ລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ, ສ່ອງແສງໄດ້ທາດແທ້ ຂອງລັດປະຊາທິປະໄຕປະຊາຊົນ ຢ່າງຈະແຈ້ງ.

2.6 ຫຼຸດຜ່ອນຄວາມແອອັດດ້ານສະຖານທີ່ເຮັດວຽກ, ຫຼຸດຜ່ອນພາຫະນະ, ວັດຖຸ, ອຸປະກອນ... ຫຼຸດຜ່ອນງົບປະມານ ການໃຊ້ຈ່າຍບໍລິຫານ ແລະ ສ້າງເງື່ອນໄຂ, ຄວາມສາມາດ ໃນການເພີ່ມເງິນເດືອນ, ເງິນອຸດໜູນ ຢ່າງສົມເຫດສົມຜົນ.

**IV. ມາດຕະການຈັດຕັ້ງປະຕິບັດ**

1. ຄະນະປັບປຸງກົງຈັກການຈັດຕັ້ງ ສົມທົບກັບຄະນະພັກກ່ຽວຂ້ອງ ປະຕິບັດໜ້າທີ່ ແລະ ຂອບເຂດສິດ ຕາມການມອບໝາຍ ຂອງກົມການເມືອງສູນກາງພັກ; ຄະນະພັກ, ຄະນະນຳແຕ່ລະຂັ້ນ ຕ້ອງກຳແໜ້ນ, ຍຶດໝັ້ນການຈັດຕັ້ງປະຕິບັດ ຕາມຫຼັກການ ແລະ ທັດສະນະຊີ້ນຳ ໃນການປັບປຸງກົງຈັກການຈັດຕັ້ງ ໃຫ້ຖືກຕ້ອງ ແລະ ເປັນລະບົບ, ມີຄວາມເປັນເອກະພາບສູງ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ ມະຕິສະບັບນີ້ ໃຫ້ໄດ້ຮັບຜົນດີ;

ການປັບປຸງ ກໍຄື ການໂຮມກົງຈັກການຈັດຕັ້ງເຂົ້າກັນຄັ້ງນີ້ ແມ່ນໃຫ້ລວມສູນການນຳພາ-ຊີ້ນຳ ເປັນເອກະພາບ ຂອງຄະນະພັກດຽວ ທີ່ໄດ້ຮັບການປັບປຸງ, ຫ້າມບໍ່ໃຫ້ຍົກຍ້າຍສະຖານທີ່ເຮັດວຽກ ແລະ ອຸປະກອນ ພື້ນຖານຮັບໃຊ້ບ່ອນເຮັດວຽກ ໄປມາຊະຊາຍ.

2. ຄະນະພັກ, ຄະນະນຳແຕ່ລະຂັ້ນ ໂດຍສະເພາະ ແມ່ນຄະນະພັກ, ຄະນະນຳ ກະຊວງ, ອົງການ ແລະ ພະແນກການ ທີ່ຖືກປັບປຸງ ຕ້ອງເພີ່ມຄວາມເອົາໃຈໃສ່ ແລະ ຖືສຳຄັນ ພ້ອມທັງຮັບຜິດຊອບໂດຍກົງ, ຖືເປັນວຽກບຸລິມະສິດໜຶ່ງ ໃນການນຳພາສຶກສາອົບຮົມການເມືອງ-ແນວຄິດ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ ຢ່າງເລິກເຊິ່ງ ຕໍ່

ການປັບປຸງກົງຈັກການຈັດຕັ້ງ; ເດັດຂາດບໍ່ໃຫ້ມີຮອຍຕໍ່ ຫຼື ເຮັດໃຫ້ວຽກງານລັດຖະການ ບ່ອນທີ່ຖືກປັບປຸງ ຖືກຖອຍ;

- ຍົກສູງສະຕິລະວັງຕົວ ຕໍ່ພວກຄົນບໍ່ດີ ທີ່ຈະສວຍໃຊ້ການປັບປຸງກົງຈັກການຈັດຕັ້ງ ເພື່ອໂຄສະນາໃສ່ຮ້າຍປ້າຍສີ, ບິດເບືອນຄວາມຈິງ, ສ້າງຄວາມບໍ່ເຂົ້າໃຈ, ແບ່ງແຍກຄວາມສາມັກຄີ ຢູ່ພາຍໃນການຈັດຕັ້ງ ແລະ ໃນສັງຄົມ;

- ຕ້ອງຕ້ານທັດສະນະແນວຄິດ ແລະ ການກະທຳ ທີ່ບໍ່ຖືກຕ້ອງ, ເຫັນແກ່ຜົນປະໂຫຍດສະເພາະໜ້າ, ສ່ວນຕົວ, ກຸ່ມກ້ອນ, ບໍ່ເຫັນຜົນປະໂຫຍດລວມ ແລະ ຜົນປະໂຫຍດຍາວນານ ຂອງຊາດ ແລະ ຂອງ ປະຊາຊົນ;

3. ມອບໃຫ້ຄະນະປັບປຸງກົງຈັກການຈັດຕັ້ງ ສົມທົບກັບລັດຖະບານ ປະຕິບັດມະຕິສະບັບນີ້ ຕາມຂັ້ນຕອນ ຂອງກົດໝາຍທີ່ກຳນົດໄວ້ ໂດຍສຸມໃສ່ການປັບປຸງກົງຈັກການຈັດຕັ້ງ ຂັ້ນກະຊວງ ອົງການ ໃຫ້ສຳເລັດຊ້າສຸດ ພາຍໃນເດືອນ ພຶດສະພາ 2025. ຈາກນັ້ນ ໃຫ້ສືບຕໍ່ດຳເນີນການປັບປຸງການຈັດຕັ້ງສາຍຕັ້ງ ຢູ່ທ້ອງຖິ່ນ ໃຫ້ສຳເລັດພາຍໃນ ເດືອນ ກໍລະກົດ 2025; ກຳນົດສິດໜ້າທີ່ ຄະນະປັບປຸງກົງຈັກ ຂອງກະຊວງ ອົງການ ແລະ ຂອງທ້ອງຖິ່ນ ໃຫ້ຮັດກຸມ, ຈະແຈ້ງ ປະຕິບັດໄດ້ງ່າຍ;

4. ຕ້ອງຄົ້ນຄວ້າເລືອກເຟັ້ນ, ສັບຊ້ອນ, ຈັດວາງ ສະມາຊິກພັກ, ພະນັກງານຄືນໃໝ່ ຢ່າງຮັດກຸມ ແລະ ເປັນລະບົບ ເຊິ່ງເປົ້າໝາຍຈຳນວນໜຶ່ງ ຈະໄດ້ສືບຕໍ່ປະຕິບັດໜ້າທີ່ ໃນຕຳແໜ່ງເດີມ ຫຼື ຫຼຸດຈາກຕຳແໜ່ງເດີມ ຕາມທິດມີເຂົ້າ-ມີອອກ, ມີຂຶ້ນ-ມີລົງ ແລະ ເປົ້າໝາຍຈຳນວນໜຶ່ງຈະໄດ້ຮັບນະໂຍບາຍ ພັກການ-ຮັບອຸດໜູນບຳນານ ຫຼື ອຸດໜູນເທື່ອດຽວ ຕາມລະບຽບການ;

5. ມອບໃຫ້ລັດຖະບານ ຈັດສັນງົບປະມານ ເພື່ອຮັບໃຊ້ວຽກງານປັບປຸງກົງຈັກການຈັດຕັ້ງ ໃນຄັ້ງນີ້ ໃຫ້ມີຜົນສຳເລັດ;

ຄະນະບໍລິຫານງານສູນກາງພັກ

ເລຂາທິການໃຫຍ່

ທອງລຸນ ສີສຸລິດ